ເລົ່ານິທານ

# ຊຽງໝ້ຽງ



ພ. ພວງສະບາ

ເລື່ອງນິທານ:

# ຊຽງໝ້ຽງ



ລຶດຈະນາ ໂດຍ: ພ. ພວງສະນາ

2011

ເລົ່ານິທານ:

# ຊຽງໝ້ຽງ

ລຶດຈະນາ ໂດຍ: *ພ. ພວງສະບາ*

*ບັນນາທິການ: ອ.ຈ. ກິ່ງເດືອນ ເນດຕະວົງ*

*ຈັດພິມ ອອກແບບປົກ ຈັດໜ້າ ໂດຍ: ສຳນັກພິມແສງສຸວັນ*

*ພິມຄັ້ງທີ 7* *ປີ* 2011
*ຈຳນວນພິມ* 2.000 *ຫົວ*
*ຂະໜາດ* 15 × 21 *ຊມ, ຈຳນວນ* 120 *ໜ້າ*
*ເລກທະບຽນພິມຈຳໜ່າຍ* 129 *ພຈ* 04052011
*ພິມທີ່:* *ໂຮງພິມພິດສະວົງ*

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ
ພ. ພວງສະບາ
ຊຽງໝ້ຽງ / ລຶດຈະນາ ໂດຍ ພ. ພວງສະບາ, ບັນນາທິການ ກິ່ງເດືອນ ເນດຕະວົງ, ພາບປະກອບ ຂັນໄຊ ວົງວິໄລ. ພິມຄັ້ງທີ 7. -- ວຽງຈັນ : ສຳນັກພິມແສງສຸວັນ, 2011
120 ໜ້າ ; 21 ຊມ.
1. ນິທານພື້ນເມືອງ--ລາວ. 2. ຊຽງໝ້ຽງ. I. ກິ່ງເດືອນ ເນດຕະວົງ II. ຂັນໄຊ ວົງວິໄລ, ຜູ້ແຕ້ມ. III. ຊື່ເລື່ອງ.

398.209594--dc21
ISBN 978-9932-404-20-9

© **ສະຫງວນລິຂະສິດ**

*ສຳນັກພິມແສງສຸວັນ*
*SENGSOUVANH Printing Co.,LTD*
*309 Nongbouathong Road, Ban Phonkham,*
*Sikhottabong Districk, Vientiane, Lao PDR.*
*Mobile: (856) 20 55607004, 55526028*
*Tel/Fax: (856) 21 540344*

# ຄຳນຳ

ນິທານຊຽງໝ້ຽງ ເປັນນິທານທີ່ຮູ້ຈັກກັນຢ່າງແຜ່ຫຼາຍໃນຊຸມຊົນທຸກຊັ້ນຄົນ ຢູ່ໃນລາວຂອງເຮົາ ເພາະເປັນນິທານຕະຫຼົກທີ່ປວງຊົນນິຍົມຟັງ ແລະ ອ່ານກັນຫຼາຍ ຈົນເຮັດໃຫ້ການພິມ, ການແຈກຢາຍລ້າໃນໂຄງການສົ່ງເສີມການອ່ານ ແລະ ການຈຳໜ່າຍ ໂດຍລາຄາຍ່ອມເຍົາ ເຮັດໃຫ້ຂາດຕະຫຼາດ.

ໜັງສືຊຽງໝ້ຽງສະບັບນີ້ ຮິບໂຮມ ແລະຮຽບຮຽງຂຶ້ນມາໂດຍ ພ. ພວງສະບາ, ນັກກະວີ, ນັກຂຽນ ສີມືດີຮຸ່ນອາວຸໂສຄົນໜຶ່ງ ທີ່ໄດ້ລ່ວງລັບຈາກໂລກນີ້ໄປແລ້ວ, ແຕ່ຜົນງານຂອງທ່ານ ຍັງເປັນທີ່ນິຍົມຊົມຊອບຂອງທົ່ວປວງຊົນຢູ່. ທ່ານຮິບໂຮມຜົນງານຊິ້ນນີ້ສຳເລັດໃນວັນທີ 18 ທັນວາ ປີ 1990. ໂດຍການປະລິວັດມາຈາກໜັງສືໃບລານລາວ ທີ່ມີໄວ້ຢູ່ຕາມວັດວາອາຮາມຕ່າງໆ. ນິທານຊຽງໝ້ຽງເປັນນິທານຕະຫຼົກອັນດັ້ງເດີມຂອງຄົນລາວ ແລະ ເປັນນິທານທີ່ມີລັກສະນະການຕໍ່ສູ້ລະຫວ່າງ ເຈົ້າສັກດີນາຜູ້ປົກຄອງ ແລະ ຊັ້ນຄົນຜູ້ຖືກປົກຄອງ ໃນສະໄໝກ່ອນຂອງສັກດີນາລາວ.

ຈາກວັນນັ້ນ ມາຮອດປະຈຸບັນ ໜັງສືຊຽງໝ້ຽງໄດ້ຈັດພິມໂດຍສຳນັກພິມ ແລະຈຳໜ່າຍປຶ້ມແຫ່ງລັດ ເປັນເທື່ອທີ 6 ແລ້ວ ແລະກໍເປັນນິທານທີ່ຂຽນເປັນຄຳຮ້ອຍແກ້ວ ດ້ວຍຄຳເວົ້າທຳມະດາ ທີ່ຕໍ່

ເນື້ອງກັນດີ, ສະນັ້ນ ໂຄງການສົ່ງເສີມການອ່ານໄດ້ຕິດຕໍ່ຂໍລິຂະສິດພິມຕໍ່ຄັ້ງທີ 7 ເພື່ອຕອບສະໜອງໃຫ້ແກ່ ໂຄງການສົ່ງເສີມການອ່ານແຫ່ງຊາດ ເພື່ອສົ່ງເສີມໃຫ້ຜູ້ອ່ານໄດ້ຮູ້ໄດ້ຟັງ ແລະ ສືບທອດໄປຮອດເຊັ່ນລູກເຊັ່ນຫຼານ.

ຂ້າພະເຈົ້າ ໃນນາມຫົວໜ້າໂຄງການສົ່ງເສີມການອ່ານ ແລະ ຜູ້ອຳນວຍການສຳນັກພິມ ມີຄວາມພູມໃຈ ແລະ ລະດົມທຶນສ່ວນບຸກຄົນ ເພື່ອພິມໜັງສືຊຽງໝ້ຽງເທື່ອນີ້ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງປວງຊົນ. ຫວັງຢ່າງຍິ່ງວ່າຈະໄດ້ຮັບການສະໜັບສະໜູນ ແລະຄວາມອົບອຸ່ນຈາກທ່ານຜູ້ອ່ານ ເພື່ອເປັນກຳລັງໃຈ, ກຳລັງແຮງຊ່ວຍກັນມາສ້າງສັງຄົມການອ່ານນຳກັນ ໃຫ້ປະກົດເປັນຈິງ.

ດ້ວຍຄວາມປາດຖະໜາດີ

ວຽງຈັນ, ວັນທີ 11 ເມສາ 2011
ປະທານ ສະມາຄົມຫ້ອງສະໝຸດລາວ
ຜູ້ອຳນວຍການສຳນັກພິມແສງສຸວັນ

*ກົງເດືອນ ເນດຕະວົງ*

# ຜູ້ຮຽບໂຮມ

ທ່ານຜູ້ອ່ານທີ່ນັບຖື ແລະ ຮັກແພງ ຂ້າພະເຈົ້າເອງ ເຄີຍຮຽບໂຮມ ຮຽບຮຽງນິທານຊຽງໝ້ຽງ ມອບໃຫ້ສຳນັກພິມ ແລະຈຳໜ່າຍປຶ້ມແຫ່ງລັດ ສປປ.ລາວ ຈັດພິມ ແລະ ຈຳໜ່າຍ ເທື່ອໜຶ່ງແລ້ວ, ການຮຽບໂຮມ ຮຽບຮຽງຄັ້ງນັ້ນ ຂ້າພະເຈົ້າໄດ້ຮຽບໂຮມ ຮຽບຮຽງເປັນແບບຮ້ອຍກອງ (ບົດກອນ) ຈຶ່ງເຫັນວ່າ ຍັງບໍ່ທັນແທດເໝາະກັບຜູ້ອ່ານເທົ່າທີ່ຄວນ, ຍ້ອນວ່າ ການອ່ານເປັນແບບບົດກອນນັ້ນ ຍັງສ້າງຄວາມສັບສົນໃຫ້ແກ່ຜູ້ອ່ານ ຄືບໍ່ສາມາດຈະຖອດເອົາເນື້ອໃນຈິດໃຈຂອງເລື່ອງນັ້ນໄດ້ດີ.

ດັ່ງນັ້ນ, ຂ້າພະເຈົ້າຈຶ່ງໄດ້ພະຍາຍາມ ຖອດຈາກບົດຮ້ອຍກອງ, (ບົດກອນ) ມາເປັນບົດຮ້ອຍແກ້ວ (ເລົ່າທຳມະດາ) ເພື່ອໃຫ້ແທດເໝາະກັບຜູ້ອ່ານທຸກເພດໄວ, ການຖອດຈາກຮ້ອຍກອງ ມາເປັນຮ້ອຍແກ້ວນີ້ ຂ້າພະເຈົ້າໄດ້ພະຍາຍາມກັ່ນກອງ ທ້ອນໂຮມເອົາແຕ່ເນື້ອໃນຈິດໃຈຂອງບັນຫາເທົ່ານັ້ນ ເພື່ອໃຫ້ຜູ້ອ່ານສາມາດເກັບກຳເນື້ອໃນໂດຍຫຍໍ້ໆໄດ້, ບໍ່ແມ່ນຖອດແບບຄຳຕໍ່ຄຳ.

ທ່ານຜູ້ອ່ານທີ່ຮັກແພງ ການຖອດເທື່ອນີ້ ສ່ວນຫຼາຍຂ້າພະເຈົ້າໄດ້ອີງໃສ່ເນື້ອໃນທີ່ມີຢູ່ໃນສະບັບເດີມ ເຊິ່ງຂ້າພະເຈົ້າໄດ້ຮຽບໂຮມຮຽບຮຽງເປັນຮ້ອຍກອງໄວ້ແລ້ວນັ້ນ, ແຕ່ເພື່ອໃຫ້ເນື້ອໃນເຫຼັ້ມທີ່ຖອດ

ເປັນຮ້ອຍແກ້ວມີອັນໃໝ່ ແລະ ຫຼາຍຕື່ມອີກ ຂ້າພະເຈົ້າຈຶ່ງໄດ້ຂຽນຕື່ມໃໝ່ 3 ຕອນ ຄື ຕອນທີ 27, 28 ແລະ 29.

ທ່ານຜູ້ອ່ານ ຕະຫຼອດເຖິງນັກຄົ້ນຄວ້າທັງຫຼາຍ ເຖິງວ່າຊຽງໝ້ຽງກັບພະຍາ ຈະພ້ອມກັນຕາຍໃນຕອນສຸດທ້າຍຂອງປຶ້ມເຫຼັ້ມນີ້ ກໍບໍ່ໄດ້ໝາຍຄວາມວ່າ ນິທານຊຽງໝ້ຽງທັງໝົດມີພຽງແຕ່ 29 ຕອນທີ່ນີ້ດອກ, ນິທານຊຽງໝ້ຽງຍັງມີຢູ່ອີກຫຼາຍໆຕອນ ແຕ່ຂ້າພະເຈົ້າ ຍັງບໍ່ທັນເກັບກຳໄດ້ຕື່ມອີກເທື່ອ.

ການຖອດຈາກຮ້ອຍກອງ ມາເປັນຮ້ອຍແກ້ວຂອງຂ້າພະເຈົ້າໃນເທື່ອນີ້ ແມ່ນເທື່ອທຳອິດ ສະນັ້ນ ຈຶ່ງບໍ່ທັນສົມບູນເທື່ອ, ຫາກມີການຂາດຕົກບົກພ່ອງປະການໃດ ຫວັງວ່າທ່ານຜູ້ອ່ານ ແລະທ່ານຜູ້ຮູ້ທັງຫຼາຍ ຄົງຈະໃຫ້ອະໄພແກ່ຂ້າພະເຈົ້າດ້ວຍ.

ວັນທີ 25 / 12 / 1990<br>
ດ້ວຍຄວາມຮັກແພງ<br>
ພ. ພວງສະບາ

# ສາລະບານ


| ເນື້ອໃນ | ໜ້າ |
|---|---|
| 1. ພະຍາຂໍທ້າວຄໍາ ມາເປັນລູກ | 1 |
| 2. ທ້າວຄໍາ ແລ່ນນໍາຕີນມ້າ | 3 |
| 3. ເນນ (ຈົວ) ຄໍາ ກິນຂີ້ອ້ອຍ | 8 |
| 4. ພະບັນກິນໝ້ຽງພໍ່ຄ້າ ຈິ່ງໄດ້ຊື່ວ່າຊຽງໝ້ຽງ | 11 |
| 5. ຊຽງໝ້ຽງເລືອກເມຍ | 16 |
| 6. ຢາກິນເຂົ້າແຊບຂອງຊຽງໝ້ຽງ | 19 |
| 7. ຊຽງໝ້ຽງຕີຊ້າງພະຍາ | 22 |
| 8. ໄປໄຫ້ນໍາລາຊະຄູ | 23 |
| 9. ຕົວະພະຍາກິນຂີ້ແຮ້ງ | 27 |
| 10. ຊຽງໝ້ຽງຕີສາວສະໜົມ | 32 |
| 11. ເກນຄົນປາກແວ່ງມາຄໍ້າຊານ | 35 |
| 12. ໄຂ່ເສັ້ງກັນ | 38 |
| 13. ພະຍາໃຫ້ຫາສິ້ນຕີນແຕ້ມ | 40 |
| 14. ຕົວະຊຽງຍານດົມຕົດ | 43 |
| 15. ເອົາຫົວລ້ານຊົນກັນ | 46 |

16. ຊຽງໝ້ຽງດູລາຍກົ້ນຍາພໍ່ 54
17. ຊຽງໝ້ຽງທວາຍວ່າພະຍາຈັກຕາຍພາຍໃນເຈັດວັນ 60
18. ຄຳພິລັງໂຈດແກ້ບັນຫາ 62
19. ຊຽງໝ້ຽງຕີວະພະຍາລົງໜອງ 71
20. ພະຍາບອກຊຽງໝ້ຽງມາກ່ອນໄກ່ 74
21. ຊຽງໝ້ຽງໄປເກັບໝາກເຜັດ 76
22. ຊຽງໝ້ຽງໄປເລວ້ເສິກ 78
23. ຊຽງໝ້ຽງປັ້ນແມ້ຜະທຍາ 86
24. ເສັ້ງແຕ້ມຮູບ 93
25. ຊຽງໝ້ຽງເອົາຄວາຍໄປຊົນຄວາຍພະຍາ 95
26. ຊຽງໝ້ຽງຂີ່ເຮືອບັ້ງພາຍ 99
27. ພະຍາບອກໃຫ້ໄປເຝົ້າໝິດຄອບຄົວ 102
28. ພະຍາບໍ່ຢາກເຫັນໜ້າຊຽງໝ້ຽງ 104
29. ຊຽງໝ້ຽງກິນງ້ວນພະຍາ 109

24/VII ຫ້າມຈຳໜ່າຍ

# 1. ພະຍາຂໍທ້າວຄຳມາເປັນລູກ

ຍັງມີເມືອງແຫ່ງໜຶ່ງ ຊື່ວ່າທະວາລາວະດີ ເມືອງນີ້ຕັ້ງຢູ່ແຄມແມ່ນ້ຳ ເປັນເມືອງທີ່ມີຄວາມອຸດົມສົມບູນໄປດ້ວຍ ເຂົ້າຂອງເງິນຄຳພືດພັນທັນຍາຫານ, ຈະເລີນຮຸ່ງເຮືອງໄປດ້ວຍ ຂະໜົບທຳນຽມຮີດຄອງປະເພນີ ມີວັດວາອາຮາມທີ່ສວຍງາມ ພວກພໍ່ຄ້າສະເພົາຈາກຕ່າງເມືອງ ນຳເອົາສິນຄ້າເຂົ້າມາບໍ່ຂາດ; ເມືອງນີ້ອ້ອມຮອບໄປດ້ວຍກຳແພງ ມີປະຕູເມືອງ ມີທໍຣົບ ເພື່ອປ້ອງກັນຕົວເມືອງເປັນຢ່າງດີ.

ພະຍາຜູ້ປົກຄອງເມືອງກໍເປັນຜູ້ຕັ້ງໝັ້ນຢູ່ໃນສິນທຳ ບໍ່ມີການອິດສາບັງບຽດ ແຕ່ລະມື້ລະຍາມ ພວກສະໜົມກົມມະວັງກໍຄອຍເຝົ້າບົວລະບັດຮັກສາພະອົງ ບໍ່ໃຫ້ມີຄວາມເດືອດຮ້ອນເຄືອງໃຈແນວໃດພະຍາເອງກໍບໍ່ເຄີຍຢ້ານກົວວ່າ ບ້ານອື່ນເມືອງໄກ ຈະເຂົ້າມາຮາວີຂົ່ມເຫັງ ຫຼືກໍ່ກວນວຸ້ນວາຍ, ຍຸທ່າງປົກຄອງໄພ່ຟ້າຂ້າແຜ່ນດິນດ້ວຍຄວາມຜາສຸກຮົ່ມເຢັນ ຍຸທ່າງກິນ ຍຸທ່າງທານຮັກສາສິນພາວະນາ.

ຫຼາຍປີຜ່ານໄປ ເມຍຜູ້ກົກກໍລວດຖືພານານ, ນັບເວລາໄດ້ສິບເອັດເດືອນ ກໍຈຶ່ງເກີດລູກອອກມາເປັນຜູ້ຊາຍ ມີຮູບໂສມອັນສວຍງາມ, ຜູ້ເປັນພໍ່ເປັນແມ່ ຈຶ່ງຕັ້ງຊື່ສຽງຮຽງນາມໃຫ້ຕາມຮີດຕາມຄອງ; ຕໍ່ມາ ພະຍາຜູ້ເປັນພໍ່ ຈຶ່ງສັ່ງໃຫ້ໂຫນ (ໝໍທວາຍ) ຂຶ້ນເຝົ້າແລ້ວຕັດສັ່ງໃຫ້ລຶງເລກເບິ່ງດວງຊາຕາຂອງກຸມານ ວ່າຈະດີ ຫຼື ຮ້າຍ ໃນພາຍຄັ້ງໜ້າ.

ຝ່າຍໝໍໂຫນເມື່ອໄດ້ລຶງເລກຕັ້ງແລ້ວກໍຂາບທູນໃຫ້ພະຍາຮູ້ວ່າຖ້າຈະທວາຍຕາມດວງຊາຕາລາສີນີ້ ຕໍ່ໄປທ້າວຈະເປັນຜູ້ມີຄວາມສຸກສະບາຍຫາຍກັງວົນ ແຕ່ວ່າຍາມຍັງນ້ອຍ ແມ່ນເປັນຄົນລ້ຽງຍາກທີ່ສຸດ, ທາງທີ່ດີແລ້ວພະອົງຄວນຊອກຫາເອົາເດັກຊາຍຜູ້ອື່ນ ທີ່ເກີດຮ່ວມມື້ຮ່ວມຍາມກັບທ້າວນີ້ມາລ້ຽງຄູ່ກັນ, ເພາະຕາມເລກດວງຊາຕານີ້ ເມື່ອທ້າວອາຍຸໄດ້ 14 ປີ ຈະໄດ້ສືບບ້ານແທນເມືອງ.

ພະຍາຜູ້ເປັນພໍ່ ໄດ້ຟັງຄຳທຳນາຍທາຍທັກຂອງໝໍໂຫນຄືແນວນັ້ນ ຈຶ່ງສັ່ງໃຫ້ເສນາອາມາດຕີຄ້ອງຮ້ອງປ່າວໄປຕາມຄຸ້ມຂວງຕ່າງໆ, ປະກາດໃຫ້ຊາວເມືອງຮູ້ວ່າ ຖ້າຜູ້ໃດເກີດລູກຮ່ວມມື້ ຮ່ວມຍາມກັບທ້າວ ພະອົງຈະຂໍເອົາມາລ້ຽງຄູ່ກັນ; ໃນທີ່ສຸດ ກໍຈຶ່ງໄດ້ລູກຂອງຊາວເມືອງຜູ້ໜຶ່ງ ເຊິ່ງເກີດຮ່ວມມື້ຮ່ວມຍາມດຽວກັນ, ເມື່ອພະຍາໄດ້ລູກນ້ອຍມາລ້ຽງຄູ່ກັນ ພະອົງກໍມີຄວາມປິຕິຊົມຊື່ນຫາອັນປຽບບໍ່ໄດ້ ແຕ່ປະກົດວ່າຍັງຂາດແມ່ນົມທີ່ຈະລ້ຽງດູ ບັງເອີນມີຄອບຄົວຂອງເສນາຂັ້ນຕໍ່າ ເມຍມັນເກີດລູກອອກມາຕາຍ, ພະຍາຈຶ່ງສັ່ງໃຫ້ຜົວເມຍຄູ່ນີ້ ເອົາທ້າວໄປລ້ຽງດູ ທ້າວຜູ້ນີ້ກໍຄື ທ້າວຄຳ ຜູ້ທີ່ມີຜະຫຍາປັນຍາເປັນເລີດນັ້ນແລ.

# 2. ທ້າວຄຳແລ່ນນຳຕີນມ້າ

ເມື່ອຄູ່ຜົວເມຍໄດ້ນຳເອົາມາລ້ຽງໄດ້ຫຼາຍປີ ທ້າວຄຳກໍໃຫຍ່ກ້າໜ້າບານຂຶ້ນມາ ສາມາດທີ່ຈະຕີບ້າຄວ່າງຄີໄດ້ແລ້ວ, ມື້ໜຶ່ງພໍ່ຈະໄປສະໜາມຫຼວງບ່ອນແຂ່ງມ້າຕີຄີ ຜູ້ເປັນພໍ່ຈຶ່ງບອກກັບທ້າວຄຳວ່າ ມື້ອື່ນເຊົ້າ ໃຫ້ລູກຖືຂັນໝາກໄປຕາມຕີນມ້ານຳພໍ່ເດີ ຝ່າຍທ້າວຄຳກໍມີຄວາມຍິນດີທີ່ຈະໄດ້ໄປນຳພໍ່; ເມື່ອເຖິງເວລາພໍ່ກໍຂຶ້ນຂີ່ມ້າອອກໜ້າໄປກ່ອນ ທ້າວຄຳກໍຖືຂັນໝາກ ຄ່ອຍຍ່າງໄປຕາມຮອຍຕີນມ້າ ໂດຍບໍ່ໄດ້ຟ້າວໄດ້ຮ້ອນຫຍັງໝົດ ເມື່ອພໍ່ໄປເຖິງສະໜາມຫຼວງ ແນມຫາທ້າວຄຳທາງໃດກໍບໍ່ເຫັນ ຢາກຄ້ຽວໝາກກໍປານນັ້ນ ຈົນຕາເວັນບ່າຍຈຶ່ງເຫັນທ້າວຄຳຍ່າງມາແບບບໍ່ຟ້າວບໍ່ຟັ່ງ ແລ້ວກໍຍື່ນຂັນຄຳໝາກໃຫ້ພໍ່ຄ້ຽວ; ພໍ່ໄດ້ສໍ້ຖາມທ້າວຄຳວ່າ ເຮັດແນວໃດຄືມາຊັກຊ້າເອົາແທ້ເອົາວ່າ ເທື່ອໜ້າເທື່ອໃນ ຢ່າເຮັດແນວນີ້ເດີ.

ມື້ລຸນມາ ພໍ່ກໍໄປສະໜາມຫຼວງຕື່ມອີກ ຄາວນີ້ພໍ່ໄດ້ສັ່ງທ້າວຄຳຢ່າງເດັດຂາດວ່າ ໃຫ້ແລ່ນນຳມ້າໃຫ້ທັນ ຢ່າໃຫ້ຫ່າງມ້າ ທ້າວຄຳເອງກໍຍິນດີປະຕິບັດຕາມ, ເມື່ອພໍ່ຂຶ້ນຂີ່ມ້າຕີແລ່ນໄປຕາມທາງ ທ້າວຄຳ



ກໍຖືຂັນໝາກແລ່ນນຳຢ່າງບໍ່ຍອມຫ່າງເລີຍ ເຄື່ອງຄ້ຽງໝາກພູຢາປູນເຮ່ຍຊະໄປສຸດທາງ ທ້າວຄຳກໍບໍ່ຫົວຊາຈະເກັບເອົາ ມີແຕ່ຕັ້ງໜ້າຕັ້ງຕາແລ່ນໃຫ້ທັນມ້າຢ່າງດຽວ, ພໍໄປຮອດສະໜາມຫຼວງ ພໍ່ແນມເບິ່ງຂັນໝາກ ບໍ່ເຫັນມີຫຍັງເຫຼືອຢູ່ເລີຍ, ເມື່ອຖືກພໍ່ສໍ້ຖາມ ທ້າວຄຳກໍຕອບຕາມຄວາມຈິງໂລດວ່າ ເຄື່ອງຄ້ຽງ ໝາກພູ ປູນຢາ ເຮ່ຍຕາມທາງ ຕີນກໍຮູ້ ແຕ່ບໍ່ໄດ້ເກັບເອົາ ເພາະພໍ່ບອກແຕ່ວ່າ ບໍ່ໃຫ້ຫ່າງຈາກມ້າ ຜູ້ເປັນພໍ່ ເຖິງແມ່ນຊິຫົວໝາກປານໃດກໍບໍ່ຊ່າງຊິຮ້າຍລູກເພາະຕົນເອງຫາກບອກບໍ່ຄັກບໍ່ແນ່.

ໃນມື້ຕໍ່ມາອີກ ພໍ່ກໍສັ່ງຢ່າງດີ ຄິດວ່າຮອບຄອບສົມຄວນກ່ອນຈະຂຶ້ນຂີ່ມ້າໄປສູ່ສະໜາມຫຼວງ, ພໍ່ໄດ້ບອກທ້າວຄຳວ່າ ຄາວນີ້ຢ່າເຮັດຄືເກົ່າເດີ ແລ່ນນຳໃຫ້ທັນມ້າ ມີຫຍັງຕົກເຮ່ຍກໍເກັບເອົາຈື່ໄວ້ເດີ. ເມື່ອມ້າແລ່ນໄປຕາມທາງ ວ່າແຕ່ແມ່ນຫຍັງຕົກຈາກຂັນໝາກ ຈາກຫຼັງມ້າ ທ້າວຄຳກໍເກັບເອົາໝົດ ມ້າຂີ້ອອກທ້າວຄຳກໍເກັບເອົາໃສ່ຂັນໝາກໃຫ້ຮຽບຮ້ອຍ, ພໍໄປເຖິງບ່ອນພັກເຊົາ ທ້າວຄຳກໍເອົາຂັນໝາກໃຫ້ພໍ່ຄ້ຽງ ແຕ່ພໍ່ກໍຕ້ອງໝົດຫວັງ ເພາະຢູ່ໃນຂັນໝາກເຕັມແຕ່ຂີ້ມ້າເໝັນກຸ້ມຫືບ, ຖ້າຊິຮ້າຍກໍບໍ່ເປັນຮ້າຍ ເພາະຕົນເອງໄດ້ບອກແນວນັ້ນແທ້.

ບັດນີ້ ທ້າວຄຳມີອາຍຸໄດ້ 7 ປີພໍດີ, ຜູ້ເປັນພໍ່ລ້ຽງເຫັນວ່າສົມຄວນນຳເອົາທ້າວຄຳໄປມອບໃຫ້ພະຍາ, ພໍ່ຈຶ່ງບອກໃຫ້ທ້າວຄຳຜັດເນື້ອແຕ່ງໂຕ ຫວີຜົມແຍງແອ່ນ ປະກົດວ່າວາດທ່າວາດທາງຂອງທ້າວ ກໍສົມເປັນລູກພະຍາແທ້, ຈາກນັ້ນ ຄູ່ຜົວເມຍຈຶ່ງພາກັນນຳທ້າວຄຳໄປມອບຄືນພະຍາ, ຝ່າຍພະຍາກໍດີອົກດີໃຈ ເຫັນທ້າວຄຳ

ໃຫຍ່ສູງມາດ້ວຍຄວາມເອົາໃຈໃສ່ຂອງຄູ່ຜົວເມຍ, ພະຍາຈຶ່ງມອບເສື້ອຜ້າອາພອນ ເງິນຄຳ ໃຫ້ຄູ່ຜົວເມຍເປັນການຕອບແທນບຸນຄຸນທີ່ໄດ້ລ້ຽງດູລູກໃຫ້.

ເມື່ອລູກຂອງພະຍາທັງສອງມີອາຍຸໄດ້ 11 ປີປາຍ ເບິ່ງຜູ້ໃດກໍມີແຕ່ຜູ້ງາມໆ ຮູບໂສມຜິວພັນກໍຄ້າຍໆຄືກັນ ພະຍາຜູ້ເປັນພໍ່ກໍຮັກທ້າວທັງສອງ ປານວ່າແກ່ນຕາສອງໜ່ວຍເອົາໂລດ, ດ້ວຍກົດເກນຂອງສັງຂານ ພະຍາກໍນັບມື້ເຖົ້າແກ່ຊະລາການ. ພະອົງຈຶ່ງມີຄວາມປະສົງຈະທິດສິງທ້າວໃຫ້ຂຶ້ນຄອງລາດແທນ, ຈຶ່ງສັ່ງໃຫ້ເສນາອາມາດຕີຄ້ອງຮ້ອງປ່າວໄປທົ່ວທຸກທີ່ນແຫ່ງ ເພື່ອບອກເຕືອນໃຫ້ຊາວເມືອງຕະຫຼອດເຖິງປະເທດໃກ້ຄຽງ ເຊິ່ງເຄີຍຜູກສຳພັນໄມຕີຕໍ່ກັນ ໃຫ້ມາຮ່ວມພິທີທິດສິງ.

ການປະກອບພິທີທິດສິງທ້າວຂຶ້ນຄອງລາດແທນ ໄດ້ປະກອບຂຶ້ນຕາມຮີດຄອງປະເພນີອັນຈົບງາມ ນັບແຕ່ພະຍາຜູ້ເປັນພໍ່ລົງມາເສນາອາມາດຕ່າງກໍພາກັນທິດສິງທ້າວ ດ້ວຍເຄື່ອງຄູ້ຈັນທອມ, ແລະມີການຄົບງັນສ້າງບັນຍາກາດໃນພິທີ ໃຫ້ມີຄວາມຄຶກຄື້ນມ່ວນຊື່ນຮຸ່ງເຮືອງໄປດ້ວຍແສງທຽນ ແສງກະທູບ ເຮັດໃຫ້ພິທີເພີ່ມຄວາມມີສະຫງ່າລາສີ, ນັບແຕ່ມື້ນັ້ນເປັນຕົ້ນມາທ້າວກໍໄດ້ຂຶ້ນຄອງລາດສົມບັດປົກຄອງໄພ່ຟ້າປະຊາກອນແທນພໍ່ ດ້ວຍຄວາມຮົ່ມເຢັນເປັນສຸກ.

ກ່າວເຖິງພະຍາຜູ້ເປັນພໍ່ ຫຼັງຈາກໄດ້ທິດສິງທ້າວຂຶ້ນນັ່ງເມືອງແທນ, ແລ້ວພະອົງກໍຮູ້ຕົວເອງດີວ່າ ຈະບໍ່ມີອາຍຸຍືນຍາວໄປອີກໃນມື້ໜຶ່ງ ຈຶ່ງສັ່ງໃຫ້ທ້າວທັງສອງເຂົ້າໄປຫາ ແລ້ວກໍເວົ້າຄວາມຈິງສູ່

ທ້າວຜູ້ເປັນລູກຄີງຟັງວ່າ ເຈົ້ານີ້ເປັນຄົນລ້ຽງຍາກແທ້ໃດ ເຈົ້າມີຊີວິດໃຫຍ່ຂຶ້ນມາໄດ້ ກໍຍ້ອນພໍ່ໄດ້ໄປຂໍເອົານ້ອງມາລ້ຽງຄູ່ກັບເຈົ້າ ເພາະວ່າເຂົາເກີດຮ່ວມວັນຮ່ວມຍາມກັບເຈົ້າ, ດັ່ງນັ້ນ ຂໍໃຫ້ເຈົ້າຈົ່ງຮັກຈົ່ງແພງນ້ອງ ຈົນເທົ້າຊົ່ວຊີວິດ ຢ່າຂ້າຢ່າຕີນ້ອງ ຖ້າວ່າຜິດພໍ່ຂ້າກໍໃຫ້ເຈົ້າປ່ອຍຖ້າຜິດເລັກໆນ້ອຍໆ ກໍຢ່າຖືສາຫາຄວາມ ໃຫ້ອິດສາລ້ຽງນ້ອງໄວ້ເປັນໝູ່ຮ່ວມຊີວິດ ທັງເປັນຜູ້ຮັບໃຊ້ໃກ້ຊິດຕິດແທດ.

ເມື່ອສັ່ງລູກເປັນທີ່ຮຽບຮ້ອຍ ພະອົງກໍສິ້ນຊີວິດ ປ່ອຍໃຫ້ລູກທັງສອງ ພ້ອມເສນາອາມາດ ແລະຊາວເມືອງພົບກັບຄວາມໂສກເສົ້າຫງ່ວມເຫງົາ, ສ່ວນທ້າວຄຳ ກໍສະແດງຄວາມກະຕັນຍູຮູ້ຄຸນພໍ່ຜູ້ລ້ຽງມາພາໃຫຍ່ ຈຶ່ງຕັດສິນໃຈແຖທົວເຂົ້າບວດເປັນຈົວ ເພື່ອຫວັງອຸທິດບຸນກຸສົນໃຫ້ພໍ່, ສຳລັບສົບຂອງພະຍາພໍ່ ກໍໄດ້ເຮັດພິທີຄົບງັນເຖິງເຈັດເດືອນ ຈຶ່ງທຳພິທີປົງສົບ ຈາກນັ້ນ ພະຍາຜູ້ເປັນລູກກໍໄດ້ນຳເອົາກະດູກໄປກໍ່ທາດກວມເອົາໄວ້.



## 3. ເນນ (ຈົວ) ຄຳກິນຂີ້ອ້ອຍ

ຢູ່ໃນວັດບ່ອນຈົວຄຳຢູ່ນີ້ ມີຄູບາອາຈານຫຼາຍອົງຢູ່ຮ່ວມກັນ, ໃນມື້ໜຶ່ງ ມະຫາເຖນສາມອົງ ຄິດຢາກມີຜະຫຍາປັນຍາເກັ່ງກ້າ ຈຶ່ງພາກັນໄປຊອກອ້ອຍມາໄດ້ເຈັດລຳ, ເພື່ອໃຫ້ອ້ອຍເກີດເປັນແຫຼ່ງຜະຫຍາປັນຍາ ຕ້ອງໄດ້ນຳເອົາໄປສູດຢູ່ປ່າຊ້າຈົນຮອດແຈ້ງ ຈຶ່ງຄ່ອຍກິນ ແລ້ວຜະຫຍາປັນຍາກໍຈະເກີດມີຕາມຄວາມຕ້ອງການ, ມະຫາເຖນທັງສາມອົງ ຈຶ່ງໄດ້ຊັກຊວນເອົາຈົວຄຳໄປນຳ ເພື່ອຊ່ວຍແບກອ້ອຍໄປສົ່ງເຖິງປ່າຊ້າ, ຝ່າຍຈົວຄຳບໍ່ຮູ້ຫຼົງມລົມຄົມໃນຂອງພວກມະຫາເຖນ ກໍຈຶ່ງຕົກລົງຈະແບກອ້ອຍໄປໃຫ້ ຕາງວ່າຊອກຮູ້ຄວາມຈິງຈາກມະຫາເຖນທັງສາມອົງ.

ເມື່ອພວກມະຫາເຖນ ກັບຈົວຄຳນຳເອົາອ້ອຍເຈັດລຳໄປເຖິງປ່າຊ້າ ຊຶ່ງຖືວ່າເປັນບ່ອນເຂັດບ່ອນຢຳແລ້ວ ກໍໄດ້ທຳພິທີຄັກແນ່ນມີການສູດຄາຖາເຂົ້າໃສ່ອ້ອຍຈົນເດິກດື່ນທ່ຽງຄືນ, ຈາກນັ້ນ ພວກມະຫາເຖນກໍອອກອຸບາຍກັບຈົວຄຳວ່າ ຈົວເອີຍ ເຈົ້າພໍຈະອົດຫຼັບອົດນອນຮອດແຈ້ງໄດ້ບໍ ຊິໃຫ້ຢູ່ເຝົ້າອ້ອຍນີ້ ພວກຂ້ອຍຈະພາກັນ

ກັບຄືນເມືອວັດກ່ອນ, ໃຫ້ຈົວລໍຖ້າຟັງສຽງລະຄັງເດີ ເມື່ອໃດໄດ້ຍິນສຽງລະຄັງ ແລ້ວໃຫ້ຟ້າວຖອດອ້ອຍອອກຈາກຄາຍສູດທັນທີ ແລ້ວແບກຄືນເມືອໄວ້ກຸຕິຫຼັງແຈວັດມ້ຽນໃຫ້ດີໆຢ້ານຄົນຈະລັກກິນຈະເສຍຜະຫຍາດີ, ຖ້າຈົວອົດນອນປະຕິບັດໄດ້ຄືຈັ່ງວ່າມານີ້ ຈະແບ່ງປັນຜະຫຍາໃຫ້, ຈົວຄຳໄດ້ຍິນແນວນັ້ນ ຄຶດຢາກໄດ້ຜະຫຍາມາຕື່ມກັບຜະຫຍາຂອງຕົນທີ່ມີຢູ່ແລ້ວ ຈຶ່ງຕົກລົງຮັບປາກປະຕິບັດຕາມ.

ຈົວຄຳອົດນອນຕະຫຼອດຄືນ, ຕື່ນມາກໍຟ້າວແບກອ້ອຍກັບມາແລະເອົາໄປມ້ຽນໄວ້ກຸຕິຫຼັງແຈວັດ ຕາມທີ່ມະຫາເຖນບອກ, ເມື່ອມ້ຽນອ້ອຍແລ້ວກໍຟ້າວໄປນອນ ເພາະອຶດນອນໝົດຄືນ; ຝ່າຍຊຸມມະຫາເຖນ ໄດ້ໂອກາດເມື່ອຈົວຄຳນອນຫຼັບ ກໍຟ້າວພາກັນມາລັກກິນອ້ອຍທັງເຈັດລຳຈົນໝົດ ຍັງແຕ່ຂໍ້ບ່ອນມັນແຂງກິນບໍ່ໄດ້ ຈຶ່ງຖິ້ມໄວ້ເພື່ອໃຫ້ຈົວຄຳມ້ຽນ.

ຈົວຄຳນອນຕື່ນກໍມະໂງມະເງຊອກຫາອ້ອຍ ປະກົດວ່າຍັງເຫຼືອຢູ່ແຕ່ຂໍ້ປົນກັບຂີ້ອ້ອຍ ຈົວຄຳຮູ້ສຶກເສຍໃຈຫາອັນປຽບບໍ່ໄດ້ ເພາະຖືກຊຸມມະຫາເຖນຫັກຫຼັງ, ຈົວຄຳກໍອົດສາເກັບເອົາຂໍ້ອ້ອຍມາກິນ ທັງຈົ່ມທັງວ່າ ອັນຄູບານີ້ກະໂພດດອກ ບ່ອນໃດເປັນປ້ອງກໍພາກັນກິນໝົດເອົາແທ້ເອົາວ່າ ເຫຼືອແຕ່ຕາກັບຂໍ້ບ່ອນກິນບໍ່ໄດ້ທໍ່ນັ້ນ; ແຕ່ຄວາມຈິງແລ້ວ ບ່ອນປ້ອງອ້ອຍທີ່ຄູບາລັກກິນນັ້ນ ບໍ່ມີຜະຫຍາຂັງຢູ່ເລີຍຜະຫຍາໄດ້ມາໂຮມຢູ່ບ່ອນຂໍ້ອ້ອຍໝົດ, ເມື່ອຈົວຄຳ ໄດ້ກິນຂໍ້ອ້ອຍກໍຈຶ່ງເກີດມີຜະຫຍາປັນຍາ ສະຫຼຽວສະຫຼາດວ່ອງໄວ ມີປະຕິພານໂວຫານອັນເກັ່ງກ້າ.

ອີກສາມມື້ຕໍ່ມາ ຈິວຄຳກໍເຂົ້າໄປໄຫວ້ ເພື່ອຖາມບັນຫາກັບພວກມະຫາເຖນ ໂດຍໄດ້ຕັ້ງເປັນກະທູ້ບັນຫາຖາມດັ່ງນີ້ :

| | |
|---|---|
| ເທດັງວາ | ແປວ່າຫຍັງ |
| ຊາໂຕ | ແປວ່າຫຍັງ |
| ຄູຊະລາຊີຊວາ | ແປວ່າຫຍັງ |
| ສິງຄາວາ | ແປວ່າຫຍັງ |
| ແປະໆຊ້ອນ ປະໆຢາຍຢາດ | ແປວ່າຫຍັງ |

ຄຳຖາມຂອງຈິວຄຳທັງໝົດນີ້ ຊຸມມະຫາເຖນບໍ່ມີໃຜສາມາດແປໄດ້ ຊອກຫາໃນໜັງສືກ້ອມ ໜັງສືມັດ ບ່ອນໃດກໍບໍ່ເຫັນຄຳຕອບ, ໃນທີ່ສຸດ ມະຫາເຖນກໍພາກັນຍອມ ບໍ່ຮູ້ວ່າຈິວຄຳໄປໄດ້ຄຳຖາມມາແຕ່ບ່ອນໃດ. ເມື່ອເຫັນວ່າມະຫາເຖນຕອບບໍ່ໄດ້ ຈິວຄຳຈຶ່ງຕອບໃຫ້ຮູ້ທັງເວົ້າແບບອວດອ້າງມະຫາເຖນວ່າ ອັນຂອງສໍ່ານີ້ ຊິຄຶດຍາກຄຶດຊາຫຍັງ ຄູບາເອີຍ ຄວາມແປຂອງຈິວຄຳມີດັ່ງນີ້ :

| | |
|---|---|
| ເທດັງວາ | ແປວ່າງວງຊ້າງ |
| ຊາໂຕ | ແປວ່າຄັນຄາກ |
| ຄູຊະລາ | ແປວ່າຄຸຮ້າງຂີ້ຊີຊຸໝົດ |
| ສິງຄາງາ | ແປວ່າງູສິງ |
| ແປະໆຊ້ອນ ປະໆຢາຍຢາດ | ແປວ່າກອງຂີ້ຄວາຍ |

ມັນຂີ້ຢາຍໄປຕາມທົ່ງໄຮ່ທົ່ງນາ

ຝ່າຍມະຫາເຖນ ເມື່ອໄດ້ຟັງຄຳຕອບຈາກຈິວຄຳແລ້ວ ກໍຄຶດຄຽດຢູ່ໃນໃຈ ເພາະບໍ່ຄຶດວ່າ ຈິວຄຳຈະເອົາຂອງໃກ້ໆ ຄຽງໆນີ້ມາຖາມ, ຄຶດວ່າແມ່ນມັນມີຄວາມລຶກລັບສັບຊ້ອນພິລຶກພິລໍ້າ. ເມື່ອຕອບໃຫ້ຮູ້ແລ້ວຈິວຄຳກໍລາກັບໄປອາບນໍ້າພັກຜ່ອນຢູ່ກຸຕິຕົນເອງຢ່າງສະບາຍ.

24/VII ຫ້າມຈຳໜ່າຍ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ